# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ເມສາ 2008 (04-20-2008)

---

## <u>ສຳຣວດເບິ່ງຄວາມພຽນອົດທົນ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ປະຖົມມະການ 26:1-3, 6, 12-22
**<u>ຄຳຖາມຊີວິດ:</u>** ເຮັດແນວໃດຈຶ່ງເຮັດໃຫ້ຂ້າພະເຈົ້າອົດທົນໄດ້?
**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຄົນຂອງພຣະເຈົ້າຕ້ອງອົດທົນດົນນານເມື່ອພົບກາບການຕໍ່ຕ້ານຂອງສັງຄົມ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂື້ນມາເພື່ອຊ່ອຍໃຫ້ທ່ານຄົ້ນຫາຫົນທາງໃໝ່ໃນຄວາມເຊື່ອຂອງທ່ານ ໂດຍ:

- ໃຫ້ທຽບກັນຄວາມອົດທົນຂອງ ອີຊາກ ກັບຄວາມອົດທົນຂອງທ່ານເມື່ອພົບກັບບັນຫາ ແລະ
- ແກ້ບັນຫາດ້ວຍຄວາມອົດທົນທາງຄວາມເຊື່ອ ເຖິງຈະມີການຕໍ່ສູ້ອັນໜັກເກີດຂື້ນ.

ໃນສັງຄົມແລະທຳນຽມຂອງພວກເຮົາບໍ່ມີຄວາມອົດທົນຕໍ່ສິ່ງບໍ່ຍອມປ່ຽນແປງ. ອາທິດທີ່ແລ້ວໄປນີ້ການຄ້າແລະ ຣາຄາເງິນຢູ່ນິວຢອກສິ່ງເປັນສູນຄ້າໂລກໄດ້ຕົກຕໍ່າທີ່ສຸດ. ແລະວັນນີ້ທີ່ຖືວ່າສິ່ງຫລ້າສຸດກໍກາຍເປັນສິ່ງຫລ້າສມັຍໃນ ມື້ອື່ນ. ຄຣິສມາດທີ່ຂາຍດີປີນີ້ ປີໜ້າກໍອາດຂາຍບໍ່ອອກ. ພວກເຮົາມີຊີວິດຢູ່ໃນປັດຈຸດບັນ ແລະມື້ອື່ນກໍໝົດສິ້ນໄປ.
ຄຣິສມາດຕ້ອງປ່ຽນແປງໄປຕາມວັດທະທັມແລະສັງຄົມ ເພື່ອຈະນຳຄົນທີ່ເຮົາຕ້ອງການໃຫ້ຮູ້ຈັກກັບເຈົ້າຂອງວັນ ຄຣິສມາດ. ຫລາຍເທື່ອໂລກທີ່ຢູ່ຮອບຕົວເຮົາໄດ້ຕໍ່ສູ້ຄົນທີ່ບໍ່ຍອມຮັບການປ່ຽນແປງໄປຕາມວັນເວລາ. ນັ້ນເປັນເຣື່ອງ ຂອງອີຊາກ ທີ່ລາວຕ້ອງການຈະຍຶດເອົາແຜນດິນແລະນໍ້າສ້າງພໍ່ຂອງລາວ ຄືອັບຣາຮາມເປັນເຈົ້າຂອງ. ຕົວຢ່າງການ ອົດທົນຂອງອີຊາກ ຄວນເປັນສິ່ງໜູນໃຈພວກເຮົາເອົາເປັນຕົວຢ່າງເວລາໄດ້ພົບກັບການຕໍ່ສູ້.

## <u>ສຶກສາພຣະຄັມ</u>

### 1. <u>ການເຂົ້າໃນແຜນການຂອງພຣະເຈົ້າ.</u> (ປະຖົມມະການ 26:1-3, 6)

**ອີຊາກ** ໄດ້ປະສົບກັບ**ການອຶດຫິວ**ເໝືອນກັບ**ຜູ້ເປັນພໍ່ ອັບຣາຮາມ**ໄດ້ປະສົບມາ. ອັບຣາຮາມ ໄດ້ພາຄອບຄົວໄປ ຢູ່ປະເທດ**ອີຢິບ** ເວລາມີຄວາມອຶດຫິວເປັນຢ່າງໜັກນັ້ນ (ປຖກ 12:10). ແຕ່ວ່າພຣະເຈົ້າມີແຜນການແນວອື່ນສຳ ລັບອີຊາກ. ພຣະເຈົ້າໄດ້ມາ**ປາກົດ**ຕົວຕໍ່ລາວ ແລະບອກວ່າບໍ່ໃຫ້ພາກັນໄປຍັງປະເທດ**ອີຢິບ**. ລາວໄປເຂົ້າໄປຍັງ ເມືອງ**ຈີຣາ**, ຊຶ່ງຢູ່ທາງພາກໃຕ້ຂອງດິນແດນທີ່ພຣະເຈົ້າໄດ້ມີພຣະສັນຍາຈະປະທານໃຫ້ອັບຣາຮາມ ແຕ່ປະຈຸບັນພວກ ຟີລິສຕິນກຳລັງອາສັຍຢູ່. ພຣະເຈົ້າມີພຣະປະສົງໃຫ້ອີຊາກ ອາສັຍຢູ່**ດິນແດນຕອນນີ້ເໝືອນເປັນຄົນຕ່າງດ້າວ**ແລະໃຫ້ ໄວ້ວາງໃຈໃນພຣະເຈົ້າວ່າ ພຣະອົງຈະເປັນຜູ້ອວຍພຣະພອນແກ່ລາວ. ໃນເວລານີ້ພຣະເຈົ້າໄດ້ທຳພຣະສັນຍາກັບອີ ຊາກໃໝ່ຊຶ່ງເຄີຍສັນຍາກັບຜູ້ເປັນພໍ່ ຄືອັບຣາຮາມມາແລ້ວ. ພຣະເຈົ້າສັນຍາວ່າຈະປະທານ**ດິນແດນ**ຢູ່ໃກ້ໆ ນີ້ໃຫ້ແກ່ ເຊື້ອສາຍຂອງລາວເໝືອນກັບອັບຣາຮາມ.

*ອາບີເມເລັກແມ່ນໃຜ*

ອາບີເມເລັກ ມີຄວາມໝາຍວ່າ, "ພໍ່ຂອງເຮົາເປັນກະສັດ," ເປັນຊື່ຂອງກະສັດ ຫລືຜູ້ມີນາມວ່າ ກະສັດຂອງພວກ ຟີລິສຕິນ ໃນເມືອງຈີຣາ, ອັບຣາຮາມ (ປຖກ. ໒໐) ແລະອີຊາກ (ປຖກ. ໒໖) ຜູ້ທີ່ຖືກຕົວະໃຫ້ເຊື່ອວ່າເມັຽຂອງຕົນເປັນນ້ອງສາວ. ແລະທັງສອງບັນພະບຸຣຸດນີ້ໄດ້ໂຕ້ຖຽງກັບຄົນທີ່ມີຊື່ວ່າ ອາບີມເລັກ ເຖິງເຣື່ອງນໍ້າ ແລະໃນທີ່ສຸດກໍໄດ້ຕົກລົງກັນໄດ້ຢ່າງສັນຕິວິທີ.

ໃນເມື່ອໄດ້ຍິນພຣະສຸຣະສຽງຂອງອົງພຣະຜູ້ເປັນເຈົ້າ ແລະເຂົ້າໃຈດີເຖິງຄໍາສັ່ງນັ້ນ ອີຊາກ**ໄດ້ອາສັຍຢູ່ເມືອງ ຈີຣາ.** ນີ້ເປັນບ່ອນສໍາຄັນຕໍ່ລາວໃຫ້ມີພະລັງຕໍ່ສູ້ກັບພວກຄົນທີ່ຢູ່ໃນດິນແດນການາອານ. ຕອນນີ້ລາວໄດ້ຍິນພຣະເຈົ້າຕັດກ່າວມາແລ້ວເຖິງການຕໍ່ສູ້ທີ່ລາວຈະປະເຊີນ. ດັ່ງນັ້ນ, ອີຊາກກໍອາສັຍຢູ່ໃນດິນຕອນນັ້ນເໝືອນຄົນຕ່າງດ້າວ ແທນທີ່ຈະແລ່ນໜີໄປ. ໃນເມື່ອມີຄວາມເຂົ້າໃຈ ແລະເອົາໃຈໃສ່ທິດທາງຂອງພຣະເຈົ້ານໍາພານັ້ນ ແລະມີການ ເຂົ້າໃຈເຖິງຄໍາສັ່ງໃຫ້ມີຄວາມອົດກັ້ນໄວ້ໄດ້ໃນຍາມລໍາບາກເກີດຂຶ້ນໃນຊີວິດ. ຖ້າພວກເຮົາບໍ່ຮູ້ຈັກແນ່ນອນ ເຖິງນໍ້າພຣະທັຍຂອງພຣະເຈົ້າພາຍໃນຊີວິດແລ້ວ ພວກເຮົາກໍເປັນຄົນບໍ່ໜັກແໜ້ນ, ແຕ່ຖ້າໃນເມື່ອເຮົາຢູ່ໃນຖ້າມກາງນໍ້າພຣະທັຍຂອງພຣະເຈົ້າ ເວລາມີການຕໍ່ສູ້ຂັດແຍ້ງເກີດຂຶ້ນພວກເຮົາກໍອົດທົນໄດ້ດີ.

ຫລາຍເທື່ອພວກເຮົາມັກເບິ່ງບັນຫາແລະກໍຄິດວ່ານັ້ນບໍ່ເປັນນໍ້າພຣະທັຍຂອງພຣະເຈົ້າ. ນັ້ນບໍ່ເປັນຄວາມຈິງສເມີໄປ. ບາງເທື່ອເຮົາມີບັນຫາທັງໆທີ່ເຮົາຢູ່ຖ້າມກາງນໍ້າພຣະທັຍຂອງພຣະເຈົ້າ. ໃຫ້ເບິ່ງໂຢເຊັບ ທີ່ໄດ້ເຂົ້າຄຸກເພື່ອພຣະເຈົ້າເພື່ອຕຽມລາວໃຫ້ຮັບເອົາສິ່ງໃຫຍ່ກວ່ານັ້ນ. ໃຫ້ເບິ່ງທ່ານໂຢບ, ຜູ້ໄດ້ສູນເສັຽທຸກຢ່າງ ແຕ່ບໍ່ໄດ້ປະຖິ້ມຄວາມເຊື່ອໃນພຣະເຈົ້າ. ໃຫ້ເບິ່ງຊີວິດຂອງອົງພຣະເຢຊູຜູ້ອົດທົນເທິງໄມ້ກາງແຂນ ເພື່ອພວກເຮົາຈະໄດ້ຊະນະຄວາມຜິດບາບແລະຄວາມຕາຍ. ບາງເທື່ອຢູ່ໃນນໍ້າພຣະທັຍຂອງພຣະເຈົ້າໝາຍຄວາມວ່າໃຫ້ປະເຊີນກັບການຕໍ່ສູ້, ແຕ່ໃຫ້ເຂົ້າໃຈວ່າພວກເຮົາບໍ່ໄດ້ຕໍ່ສູ້ແຕ່ຄົນດຽວ-ພຣະອົງເຈົ້າໄດ້ສະຖິດຢູ່ກັບພວກເຮົາໃນການຕໍ່ສູ້ນັ້ນ.

## ໒. <u>ສັງຄົມບໍ່ຕ້ອງການ</u> (ປະຖົມມະການ ໒໖:໑໒-໑໖)

ໃນເມື່ອພຣະເຈົ້າໄດ້ບອກໃຫ້ອີຊາກຢູ່ບ່ອນທີ່ລາວຢູ່ນັ້ນ, **ອີຊາກ**ໄດ້ຕອບສນອງດ້ວຍການເອົາໃຈໃສ່ເຮັດວຽກໜັກ. ລາວເຫັນດິນແດນໃຫ້ຄຽງແລ້ວ ແລະລາວ**ຫວ່ານຝືລປູກລົງ**ໃນທີ່ສຸດກໍໄດ້**ຮັບການເກັບກ່ຽວຮ້ອຍເທົ່າ**ຈາກສິ່ງທີ່ລາວໄດ້ຫວ່ານລົງນັ້ນ. ນັກບັນທຶກໄດ້ກ່າວເຖິງວິທີທີ່ພຣະເຈົ້າໄດ້ຊົງ**ອວຍພຣະພອນແກ່ລາວ.** ສິ່ງເຫັນໄດ້ງ່າຍໆກໍແມ່ນພຣະເຈົ້າໄດ້ອວຍພຣະພອນທາງດ້ານສິ່ງຂອງແກ່ຄົນທີ່ພຣະເຈົ້າໄດ້ເລືອກໄວ້, ແຕ່ວ່າໃນຕອນນີ້ອີຊາກໄດ້ກາຍເປັນຄົນຮັ່ງມີທີ່ສຸດ. ຄວາມຮັ່ງມີຂອງລາວແມ່ນມີຝູງສັດຫລາຍ, **ມີຄົນໃຊ້,** ແລະຊັບສິນ. ຍ້ອນລາວຮັ່ງມີນີ້ພວກ **ຟີລິສຕິນ**ຈຶ່ງມີຄວາມອິດສາ. ຫລາຍເທື່ອພຣະເຈົ້າອວຍພຣະພອນແກ່ຄົນຂອງພຣະອົງ ແລະຜູ້ທີ່ບໍ່ຮູ້ຈັກພຣະອົງມີໃຈອິດສາຕໍ່ພຣະພອນທີ່ພຣະອົງມອບໃຫ້.

ອີຊາກໄດ້ເຮັດຫຍັງ ພວກຟີລິສຕິນຈຶ່ງມັກປ້ອຍດ່າ? ອີຊາກບໍ່ໄດ້ເຮັດຫຍັງຜິດ ມີແຕ່ລາວໄດ້ເຊື່ອຟັງອົງພຣະຜູ້ເປັນເຈົ້າ ແລະໃນທີ່ສຸດ ພຣະເຈົ້າກໍໄດ້ອວຍພຣະພອນແກ່ລາວຫລາຍ. ບາງຄັ້ງພວກເຮົາບໍ່ໄດ້ເຮັດຫຍັງຜິດຕໍ່ສັງຄົມ ແຕ່ສັງຄົມບໍ່ມັກພວກເຮົາຕ່າງຫາກ. ຕົວຢ່າງໃນເຣື່ອງນີ້ຄື ພວກຟີລິສຕິນໄດ້ເອົາຂີ້ດິນຖົມນໍ້າສ້າງທີ່ເປັນກໍາມະສິດຂອງລາວ ຊຶ່ງອັບຣາຮາມໄດ້ຂຸດເພື່ອໃຫ້ເຊື້ອສາຍຂອງຕົນໃນລຸ້ນຕໍ່ມາ. ກະສັດອາບີເມເລັກກໍໄດ້ບອກໃຫ້ອີຊາກຍົກຍ້າຍອອກໄປເພາະລາວກາຍເປັນຄົນຮັ່ງມີແລະມີອໍານາດ. ຄວາມຮັ່ງມີແລະມີອໍານາດເປັນເຫດໃຫ້ສັງຄົມຢ້ານກົວ.

ຫລາຍເທື່ອສັງຄົມລັງກຽດແລະບໍ່ຢາກໃຫ້ພວກເຮົາຢູ່ໃກ້ຊິດເຂົາ, ແຕ່ໃນກໍຣະນີຂອງອີຊາກ ລາວບໍ່ຍອມໜີໄປທາງອື່ນ ເພາະລາວເຊື່ອຟັງພຣະເຈົ້າແລະຕ້ອງເປັນພະຍານຕໍ່ພວກເຂົາ. ຖ້າລາວໜີອອກໄປກໍໝາຍຄວາມວ່າລາວຢ້ານແລະບໍ່ເຊື່ອຟັງພຣະເຈົ້າ. ລາວຕ້ອງອາສັຍຢູ່ຖ້າມກາງພວກການາອານອີກຕໍ່ໄປ

ສັງຄົມປ້ອຍດ່າພວກເຮົາໃນຫລາຍໆທາງ. ອີຊາກຕ້ອງມີຄວາມອົດທົນຕໍ່ຄວາມຂັດແຍ້ງຂອງຄວາມເຊື່ອທີ່ລາວມີຕໍ່ພຣະເຈົ້າ. ພວກເຂົາພະຍາຍາມເຮັດໃຫ້ພວກເຮົາໝົດກຳລັງໃຈ ບໍ່ໃຫ້ເຊື່ອຟັງພຣະເຈົ້າສືບຕໍ່ໄປ. ແຕ່ຢ່າງໃດກໍຕາມອີຊາກບໍ່ຍອມໃຫ້ສິ່ງແວດລ້ອມເຮັດໃຫ້ລາວໝົດກຳລັງໃນການເຮັດຕາມນ້ຳພຣະທັຍຂອງພຣະເຈົ້າໃນຊີວິດລາວ.

ພວກເຮົາຢ່າພາກັນສົນໃຈໃນເຣື່ອງຄົນອື່ນຄິດ ແຕ່ຕ້ອງເອົາໃຈໃສ່ກັບສິ່ງທີ່ພຣະເຈົ້າໄດ້ບອກເຮົາຜ່ານທາງພຣະຄຳຂອງພຣະອົງ. ຄຣິສະຕຽນບໍ່ຄວນແປກໃຈໃນເມື່ອສັງຄົມຕໍ່ຕ້ານທັງໆທີ່ເຮົາບໍ່ໄດ້ເຮັດຫຍັງຜິດເລີຍ.

**3. <u>ບໍ່ຍອມແພ້ການຕໍ່ຕ້ານ</u>** (ປະຖົມມະການ. 26:17-22)

ເຖິງມີການຕໍ່ຕ້ານຈາກກະສັດ, **ອີຊາກ**ໄດ້ຮັກສາຄຳສັ່ງຂອງພຣະເຈົ້າໄວ້. ລາວໄດ້ເຮັດຕາມຄວາມຮ້ອງຂໍຂອງກະສັດໃຫ້ຍົກຍ້າຍອອກໄປຈາກເມືອງ ຈີຣາ, ແຕ່ລາວບໍ່ໄດ້ຍ້າຍອອກໄປໄກຈາກເຂດແດນນັ້ນ. ລາວໄດ້ຍ້າຍໄປໃກ້ຮ່ອມ **ພູ ຈີຣາ** ແລະກໍໄດ້ຂຸດນ້ຳສ້າງຫລາຍໆຫນ່ວຍຍິ່ງ**ກວ່າສມັຍຂອງອັບຣາຮາມຜູ້ເປັນພໍ່ໄດ້ເຮັດ**. ພຣະເຈົ້າໄດ້ອວຍພຣະພອນໃຫ້ລາວຫລາຍທີ່ສຸດ ດັ່ງນັ້ນ, ລາວຕ້ອງການນ້ຳສ້າງ ຈຶ່ງເປັນເຫດໃຫ້ຄົນໃຊ້ເຮັດວຽກໜັກໂດຍການອອກແຮງງານຂຸດນ້ຳສ້າງບ່ອນໃໝ່ເລື້ອຽງ. ໃນເມື່ອພວກຄົນໃຊ້ຂອງອີຊາກ ຂຸດນ້ຳສ້າງແລະໄດ້ນ້ຳດີ ພວກລ້ຽງສັດຢູ່ເມືອງ **ຈີຣາ** ກໍມີຄວາມອິດສາຂຶ້ນ. ພວກເຂົາມາຜິດຖຽງ ແລະອ້າງວ່າພວກເຂົາເປັນເຈົ້າຂອງນ້ຳສ້າງທີ່ຂຸດໄວ້ນັ້ນ. ດັ່ງນັ້ນ, ອີຊາກຈຶ່ງໃສ່ຊື່ນ້ຳສ້າງນັ້ນວ່າບ່ອນ**ຜິດຖຽງກັນ** ແລະລາວກໍພາຄົນໃຊ້ອອກໄປຫາບ່ອນໃໝ່. ໃນເມື່ອຂຸດຢູ່ບ່ອນ ໃໝ່ເມື່ອເຫັນນ້ຳແລ້ວກໍເກີດມີບັນຫາອີກ ລາວຈຶ່ງໃສ່ຊື່ນ້ຳສ້າງນັ້ນວ່າ**ຕໍ່ສູ້ກັນ**. ໃນທີ່ສຸດລາວກໍພາກັນໄປຂຸດອີກບ່ອນໃໝ່ແລະບໍ່ມີໃຜມາລົບກວນ ລາວຈຶ່ງໃສ່ຊື່ບ່ອນນັ້ນວ່າບ່ອນກວ້າງໃຫຍ່, ຍອມຮັບວ່າພຣະເຈົ້າໄດ້ຊ່ອຍໃຫ້ມີ**ບ່ອນອາສັຍຢູ່**ຢ່າງສັນຕິສຸກໃນແຜ່ນດິນ.

ເຖິງແມ່ນວ່າພຣະເຈົ້າບອກໃຫ້ອີຊາກ ອາສັຍຢູ່ດິນແດນ ຈີຣາ, ພຣະອົງບໍ່ໄດ້ເອີ້ນລາວໃຫ້ໄປຜິດຖຽງກັບຄົນຢູ່ບ້ານເມືອງແຫ່ງນັ້ນ. ອີຊາກຍອມຫນີຈາກການຜິດຖຽງປະການເປັນສັດຕູກັນນັ້ນໄວ້ທາງຫຼັງເພາະວ່າລາວບໍ່ໄດ້ເຮັດຫຍັງຜິດ. ລາວຍອມສ້າງສັນຕິສຸກ ແທນທີ່ຈະຕໍ່ສູ້ເອົາສິດທິການເປັນເຈົ້າຂອງນ້ຳສ້າງນັ້ນ. ການກະທຳຂອງລາວສ້າງຜົນດີສອງຢ່າງຄື ສັນຕິສຸກແລະມີຈິດໃຈກວ້າງຂວາງ. ລາວມີສາຍຕາໄກເພື່ອຈະມີໂອກາດເປັນພະຍານເຣື່ອງພຣະເຈົ້າຍອມໃຫ້ເຂົາກໍດີກວ່າຈະຕໍ່ສູ້ກັນ ຊຶ່ງເປັນທາງອອກດີທີ່ສຸດສຳລັບທັງສອງຝ່າຍ.

ໃນລະຍະສັ້ນໆ ອີຊາກໄດ້ຮັບການປ່ຽນແປງ ແລະທ້າທາຍຫລາຍທີ່ສຸດ. ການອົດທົນບໍ່ໄດ້ໝາຍຄວາມວ່າລາວເຮັດສິ່ງເຄີຍເຮັດມາກັບຄົນທີ່ຢູ່ບ່ອນເກົ່າ. ແຕ່ວ່າການອົດທົນແມ່ນການຊອກສແວງຫາເປົ້າໝາຍທີ່ພຣະເຈົ້າໄດ້ມີໄວ້ ຊຶ່ງສິ່ງລາວໄປຢູ່ອາສັຍໃນທີ່ນັ້ນ. ໃນທີ່ສຸດລາວກໍຮູ້ຈັກວ່າພຣະເຈົ້າໄດ້ນຳພາຊີວິດຂອງລາວໃຫ້ອອກຈາກບັນຫາ ແລະເຂົ້າໄປຢູ່ໃນ**ບ່ອນກວ້າງໄກ**, ຊຶ່ງເປັນບ່ອນໄດ້ຮັບ**ຜົນປໂຍດດີໃນແຜ່ນດິນ**.

ເໝືອນກັບອີຊາກ ພວກເຮົາຕ້ອງມີຄວາມອົດທົນດົນນານຕໍ່ບັນຫາ ແລະໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າ ໃຫ້ພຣະອົງນຳພາຊີວິດຂອງພວກເຮົາເຂົ້າໄປຫາບ່ອນກວ້າງໄກ ແລະປະບັນຫານາງຊະນິດໄວ້ເບື້ອງຫລັງ. ໃນເມື່ອບັນຫາສິ້ນສຸດລົງ, ພຣະເຈົ້າກໍໄດ້ກັບມາປາກົດຕົວຕໍ່ອີຊາກ ແລະສືບຕໍ່ພຣະສັນຍາກັບລາວອີກ. (ປຖກ. 26:23-25). ຄວາມສັດຊື່ຂອງອີຊາກ ນຳພາໄປເຖິງການຖວາຍຕົວໃໝ່ຕໍ່ຈຸດປະສົງຂອງພຣະເຈົ້າໃນຊີວິດຂອງລາວ. ການອົດທົນດົນນານຜ່ານຕໍ່ບັນຫານຳເອົາຜົນກຳໄລມາສູ່ຊີວິດຂອງລາວ.

## ບົດຮຽນໃນຊີວິດ

ຫລາຍເທື່ອຊີວິດຄຣິສະຕຽນເຫັນວ່າບໍ່ເຂົ້າກັບສັງຄົມເທົ່າໃດ ເພາະມີມາດຕະຖານ ແລະທັມນຽມແຕກຕ່າງກັນໃນຊີວິດ. ເຣື່ອງດັ່ງກວ່ານີ້ຈຶ່ງເປັນເຫດໃຫ້ມີບັນຫາເກີດຂຶ້ນລະຫວ່າງຄຣິສະຕຽນແລະຄົນຝ່າຍໂລກ. ແຕ່ຢ່າງໃດກໍຕາມ ຄຣິສະຕຽນຄວນອົດທົນດົນນານຕໍ່ບັນຫາທີ່ພວກເຮົາປະເຊີນນັ້ນ. ໃຫ້ຖືເສັຽວ່າການທີ່ເຮົາອົດທົນນັ້ນກໍເພື່ອເຮົາຈະມີໂອກາດເປັນພະຍານໃຫ້ແກ້ສັງຄົມ ຜູ້ທີ່ຍັງບໍ່ມີໂອກາດໄດ້ຮູ້ຈັກກັບພຣະເຈົ້າຂອງເຮົາ. ການທີ່ອິຊາກອົດທົນດົນນານນັ້ນເປັນບົດຮຽນດີຕໍ່ຊີວິດຂອງພວກເຮົາໃນທຸກວັນນີ້ຫຍັງແດ່?

- ໃຫ້ເອົາຊີວິດຂອງເຮົາຢູ່ໃນພຣະປະສົງຂອງພຣະເຈົ້າໃນການຕັດສິນໃຈຂອງພວກເຮົາ ເຊັ່ນຈະໄປຢູ່ໃສ, ຈະເຮັດວຽກຫຍັງ, ຄຣິສຕະຈັກໃດຈະເປັນສະມາຊິກ, ແລະຊີວິດອື່ນໆອີກດ້ວຍ. ຕ້ອງໃຫ້ແນ່ໃຈວ່າທ່ານຢູ່ໃນສູນກາງຂອງພຣະປະສົງຂອງພຣະເຈົ້າໃນຊີວິດ. ບາດກ້າວອັນໃດທີ່ທ່ານຕ້ອງເຮັດເພື່ອທ່ານຈະເຂົ້າໃຈແຜນການຂອງພຣະເຈົ້າ?
- ຢ່າແປກໃຈເຖິງການຕໍ່ສູ້ຈາກສັງຄົມທີ່ພຣະເຈົ້າໄດ້ອວຍພຣະພອນແກ່ເຮົາ. ເພາະຜູ້ທີ່ຍັງບໍ່ໄດ້ຮັບພຣະພອນຈາກພຣະເຈົ້າກໍບໍ່ສາມາດເຂົ້າໃຈເຖິງພຣະພອນທີ່ພຣະເຈົ້າປະທານໃຫ້ຄົນຂອງອື່ນ. ເຮັດແນວໃດທ່ານຈຶ່ງສາມາດອົດກັ້ນໄວ້ນານເພື່ອທ່ານຈະບໍ່ມີຄວາມຂົມຂື່ນໃນໃຈ ແລະສາມາດຢູ່ກັບສັງຄົມໄດ້?
- ບາງຄັ້ງພວກເຮົາຄວນຢືນຂຶ້ນຕໍ່ສັງຄົມຜູ້ທີ່ປ່ອຍດ່າເຮົາ, ແລະຫລາຍເທື່ອພວກເຮົາຕ້ອງສ້າງສັນຕິສຸກກໍດີກວ່າ. ມີຫລັກການຢ່າງໃດທີ່ທ່ານຕ້ອງເອົາປະກອບໃຊ້ເພື່ອທ່ານຈະໄດ້ຮູ້ວ່າເວລາໃດຄວນຢືນຂຶ້ນ ແລະເວລາຄວນອອກໜີໄປ?

ພວກເຮົາຕ້ອງສແວງຫາພຣະເຈົ້າວ່າເວລາໃດຄວນຍ່າງອອກໄປຈາກສັງຄົມ ແລະເວລາໃດຄວນພົບກັບມັນເພື່ອໃຫ້ເກີດຜົນດີ. ທ່ານຕ້ອງການຊ່ວຍໃນການຕັດສິນໃຈຢ່າງນັ້ນດ້ວຍວິທີໃດ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.